ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ...117.../ຖວທ

ນະຄອນຫຼວງວຽງຈັນ, ວັນທີ..04..ເມສາ 2022

# ຄຳແນະນຳ
# ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ຮູບເງົາ

- ອີງຕາມ ກົດໝາຍວ່າດ້ວຍ ຮູບເງົາ ສະບັບເລກທີ 76/ສພຊ, ລົງວັນທີ 27 ພະຈິກ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021.

## ລັດຖະມົນຕີ ອອກຄຳແນະນຳ:

**I. ຈຸດປະສົງ**

ຄຳແນະນຳສະບັບນີ້ ວາງອອກເພື່ອ ແນະນຳ, ອະທິບາຍ ແລະ ຜັນຂະຫຍາຍເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍຮູບເງົາ ເພື່ອໃຫ້ມີຄວາມລະອຽດ, ຈະແຈ້ງ, ສອດຄ່ອງ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

**II. ແນະນຳການຈັດຕັ້ງປະຕິບັດ ບາງມາດຕາ ຂອງກົດໝາຍວ່າດ້ວຍ ຮູບເງົາ ມີດັ່ງນີ້:**

**1. ມາດຕາ 17 ການຂໍອະນຸຍາດຜະລິດຮູບເງົາ**

**1.1 ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ພິຈາລະນາ, ອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກຮູບເງົາຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຢູ່ພາຍໃນປະເທດ ທີ່ມີຄວາມຍາວຕັ້ງແຕ່ 45 ນາທີຂຶ້ນໄປ ໃນຂອບເຂດທົ່ວປະເທດ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຢູ່ຕ່າງປະເທດ ທີ່ຈະຜະລິດຮູບເງົາກ່ຽວກັບ ສປປ ລາວ ແມ່ນຂັ້ນກະຊວງ ເປັນຜູ້ອະນຸຍາດ ຜ່ານເນື້ອໃນຮູບເງົາດັ່ງກ່າວ.

**1.2 ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ພິຈາລະນາ, ອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກ ກ່ຽວກັບຮູບເງົາຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ມີຄວາມຍາວ 44 ນາທີລົງມາ.

**2. ມາດຕາ 21 ການກຳນົດອາຍຸຜູ້ຊົມຮູບເງົາ**

ການກຳນົດອາຍຸຜູ້ຊົມ ພາຍຫຼັງຈາກຄະນະກຳມະການກວດກາເນື້ອໃນຮູບເງົາສຳເລັດແລ້ວ ໃຫ້ແຈ້ງ ເກນອາຍຸຜູ້ຊົມຮູບເງົາດັ່ງກ່າວໃຫ້ພາກສ່ວນທີ່ຂໍອະນຸຍາດຮັບຮູ້ ແລະ ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຫາ 4 ມາດຕາ 21

ຂອງກົດໝາຍວ່າດ້ວຍຮູບເງົາ; ພ້ອມທັງເອົາສັນຍາລັກທີ່ຄະນະກຳມະການກຳນົດໃຫ້ຂຶ້ນໃນຈໍພາບກ່ອນຈະສາຍຮູບເງົາ ທຸກເລື່ອງ.

ສັນຍາລັກກຳນົດເກນອາຍຸຜູ້ຊົມຮູບເງົາ ມີທັງໝົດ 4 ສັນຍາລັກ ດັ່ງນີ້:

1. ຜູ້ຊົມໂດຍບໍ່ຈຳກັດອາຍຸ ສາມາດຊົມຮູບເງົາທີ່ມີເນື້ອໃນບໍ່ຮຸນແຮງ, ມີສາລະໃຫ້ຄວາມຮູ້ ແລະ ສ້າງສັນບັນເທີງ;




2. ຜູ້ຊົມທີ່ມີອາຍຸ 13 ປີ ລົງມາ ສາມາດຊົມຮູບເງົາທີ່ມີເນື້ອໃນ ທີ່ມີຄວາມຮຸນແຮງບໍ່ຫຼາຍ ແຕ່ຕ້ອງມີຜູ້ປົກຄອງ ຫຼື ຜູ້ຊົມທີ່ມີອາຍຸ 18 ປີຂຶ້ນໄປໃຫ້ຄຳແນະນຳສິ່ງໃດຜິດ ສິ່ງໃດຖືກ ແລະ ສິ່ງໃດຄວນເຊື່ອຫຼື ບໍ່ຄວນເຊື່ອ;




3. ຜູ້ຊົມທີ່ມີອາຍຸເກີນກວ່າ 13 ປີ ຫາ ຕ່ຳກວ່າ 18 ປີ ສາມາດຊົມຮູບເງົາທີ່ມີເນື້ອໃນຄວາມຮຸນແຮງຫຼາຍກວ່າຂໍ້ສອງມີສາກກ່ຽວກັບຄວາມສຳພັນທາງເພດທີ່ບໍ່ເປີດເຜີຍ, ມີການຕໍ່ສູ້ກັນ ແຕ່ບໍ່ເຖິງຂັ້ນໂຫດຮ້າຍປ່າເຖື່ອນຈົນເກີນໄປ;



4. ຜູ້ຊົມທີ່ມີອາຍຸແຕ່ 18 ປີຂຶ້ນໄປ ສາມາດຊົມຮູບເງົາທີ່ມີເນື້ອໃນຮຸນແຮງ, ໂຫດຮ້າຍ, ມີສາກກ່ຽວກັບຄວາມສຳພັນທາງເພດ.




**3. ມາດຕາ 22 ການຂໍອະນຸຍາດສົ່ງອອກ - ນຳເຂົ້າຮູບເງົາ**

**3.1 ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພິຈາລະນາ, ອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກການສົ່ງອອກ-ນຳເຂົ້າຮູບເງົາ ມີດັ່ງນີ້:**

- ການສົ່ງອອກ - ນຳເຂົ້າ ຮູບເງົາເອກະສານ, ຮູບເງົາສາລະຄະດີ, ຮູບເງົາເລື່ອງ, ຮູບເງົາກາຕູນ ແລະ ຮູບເງົາປະເພດອື່ນໆ ທີມີຄວາມຍາວ 45 ນາທີຂຶ້ນໄປ ທີ່ສາຍຢູ່ໃນໂຮງ, ສາຍເຄື່ອນທີ, ສາຍໃນງານມະໂຫລານທັງພາຍໃນ ແລະ ຕ່າງປະເທດ;
- ຂັ້ນຕອນການສົ່ງອອກ - ນຳເຂົ້າຕ້ອງສະເໜີຕໍ່ຂະແໜງການອື່ນທີກ່ຽວຂ້ອງ.

**3.2 ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ພິຈາລະນາ, ອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກການສົ່ງອອກ - ນຳເຂົ້າຮູບເງົາ ດັ່ງນີ້:**

- ການສົ່ງອອກ - ນຳເຂົ້າຮູບເງົາ ເອກະສານ, ຮູບເງົາສາລະຄະດີ, ຮູບເງົາເລື່ອງ, ຮູບເງົາກາຕູນ ແລະ ຮູບເງົາປະເພດອື່ນໆ ທີມີຄວາມຍາວ 44 ນາທີລົງມາ ທີ່ສາຍຢູ່ໃນໂຮງ, ສາຍເຄື່ອນທີ, ສາຍໃນງານມະໂຫລານທັງພາຍໃນ ແລະ ຕ່າງປະເທດ;
- ຂັ້ນຕອນການສົ່ງອອກ - ນຳເຂົ້າຕ້ອງສະເໜີຕໍ່ຂະແໜງການອື່ນທີກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ.

**4. ມາດຕາ 37 ອີງການທີ່ມີສິດສະເໜີນາມມະຍົດ**

ໃນມາດຕານີ້ໄດ້ກຳນົດວ່າລາຍລະອຽດຂອງການສະເໜີນາມມະຍົດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ ແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ.

## III. ການຈັດຕັ້ງປະຕິບັດ

ມອບໃຫ້ຂະແໜງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

## IV. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ສອນສະຫວັນ ວິຍະເກດ